# ມິຊຊາສະຫລອງຄອບຄົວສັກສິດ ປີ A
# ວັນທີ 29 ທັນວາ 2019



**ພຣະວໍລະສານໂດຍນັກບຸນມັດເທວ 2, 13-15, 19-23**

ເມື່ອພວກບັນດິດກັບໄປແລ້ວ, ເທວະດາຂອງພຣະເຈົ້າໄດ້ປະຈັກມາຫາຢໍແຊໃນຄວາມຝັນແລະກ່າວວ່າ: ຈົ່ງລຸກຂຶ້ນພາພຣະກຸມານແລະພຣະມານດາໜີໄປປະເທດເອຢິບ ແລະພັກຢູ່ທີ່ນັ້ນຈົນກວ່າຈະໄດ້ຮັບຄຳສັ່ງໃໝ່, ຍ້ອນວ່າກະສັດເຮຣົອດກຳລັງຊອກຂ້າພຣະກຸມານ. ຢໍແຊຈຶ່ງລຸກຂຶ້ນພາພຣະກຸມານແລະພຣະມານດາເດີນທາງໄປເອຢິບໃນຄືນນັ້ນເອງ ແລະພັກຢູ່ທີ່ນັ້ນຈົນຮອດກະສັດເຮຣົອດຕາຍ. ທັງນີ້ກໍເພື່ອໃຫ້ສຳເລັດຕາມທີ່ພຣະອົງເຈົ້າໄດ້ກ່າວໄວ້ທາງປະພາສົກວ່າ: ເຮົາໄດ້ຮຽກບຸດຂອງເຮົາຄືນມາຈາກປະເທດເອຢິບ.

ເມື່ອກະສັດເຮຣົອດຕາຍແລ້ວ, ເທວະດາຂອງພຣະອົງເຈົ້າໄດ້ປະຈັກມາຫາຢໍແຊຢູ່ປະເທດເອຢິບກ່າວວ່າ: ຈົ່ງລຸກຂຶ້ນພາພຣະກຸມານແລະພຣະມານດາຫລົບເມືອປະເທດອິສຣາແອນ ຍ້ອນວ່າຜູ້ທີ່ຊອກຂ້າພຣະກຸມານນັ້ນຕາຍແລ້ວ. ຢໍແຊກໍລຸກຂຶ້ນພາພຣະກຸມານແລະພຣະມານດາຫລົບເມືອປະເທດອິສຣາແອນ.

ແຕ່ເມື່ອຊາບວ່າ ອາເຄເລົາຂຶ້ນຄອງລາດຢູ່ປະເທດຢູເດແທນກະສັດເຮຣົອດຜູ້ບິດາ ຈຶ່ງບໍ່ກ້າເຂົ້າໄປໃນດິນແດນນັ້ນ. ຢໍແຊໄດ້ຮັບຄຳເຕືອນໃນຄວາມຝັນຈຶ່ງເຂົ້າໄປໃນແຂວງກາລີເລ ແລະຕັ້ງພູມລຳເນົາຢູ່ເມືອງໜຶ່ງຊື່ນາຊາແລັດ. ທັງນີ້ກໍເພື່ອໃຫ້ສຳເລັດຕາມທີ່ໄດ້ກ່າວໄວ້ທາງປະພາສົກວ່າ: ພຣະອົງຈະໄດ້ຮັບຊື່ວ່າ ຊາວນາຊາແລັດ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 2, 13-15, 19-23**

ຫລັງຈາກງານສົມໂພດພຣະເຢຊູເຈົ້າບັງເກີດ ອັນເປັນວັນແຫ່ງຄວາມຊື່ນຊົມຍິນດີຂອງມະນຸດທັງມວນ ຍ້ອນພຣະບຸດພຣະເຈົ້າໄດ້ບັງເກີດມາເພື່ອຢູ່ນຳພວກເຮົາ, ເພື່ອນຳພວກເຮົາຄືນເມືອຫາພຣະບິດາເຈົ້າ.

ວັນນີ້, ພຣະກຣິສຕະຈັກກໍເຊີນຊວນພວກເຮົາເພັ່ງຊົມບໍ່ພຽງແຕ່ພຣະເຢຊູກຸມານຜູ້ເປັນຈຸດໃຈກາງຂອງຄອບຄົວສັກສິດເທົ່ານັ້ນ, ແຕ່ພຣະກຣິສຕະຈັກຍັງເຊີນຊວນພວກເຮົາເພັ່ງຊົມແມ່ພຣະມາຣີອາ ແລະເປັນຕົ້ນນັກບຸນຢໍແຊຜູ້ເປັນຫົວໜ້າຄອບຄົວສັກສິດອີກດ້ວຍ. ດ້ວຍເຫດນີ້ໃນວາຈາພຣະເຈົ້າວັນນີ້ພວກເຮົາຈະເຫັນວ່ານັກບຸນຢໍແຊເປັນບຸກຄົນສຳຄັນ: ຍ້ອນເທວະດາຂອງພຣະເຈົ້າໄດ້ປະຈັກມາຫາທ່ານ ແລະແມ່ນທາງເອງເປັນຜູ້ປົກປ້ອງແລະນຳພາແມ່ພຣະມາຣີອາແລະພຣະເຢຊູກຸມານປົບໜີການຕາມຂ້າຂອງກະສັກເຮຣັອດໄປປະເທດເອຢິບ. ຈາກນັ້ນ, ກໍຍັງແມ່ນນັກບຸນຢໍແຊທີ່ນຳພາຄອບຄົວຂອງຕົນກັບຄືນມາບ້ານນາຊາແລັດບ່ອນທີ່ທ່ານແລະແມ່ພຣະມາຣີອາຈະເບິ່ງແຍງແລະລ້ຽງດູພຣະເຢຊູເຈົ້າຈົນໃຫຍ່.

ເປັນຫຍັງໃນວັນສະຫລອງຄອບຄົວສັກສິດ ພຣະກຣິສຕະຈັກຈຶ່ງໃຫ້ພວກເຮົາອ່ານແລະລຳເພີງວາຈາພຣະເຈົ້າກ່ຽວກັບກະສັດເຮຣັອດທີ່ໄລ່ຂ້າພຣະເຢຊູກຸມານ? ນັກບຸນຢໍແຊແລະແມ່ພຣະມາຣີອາເປັນຄອບຄົວສັກສິດຍ້ອນມີພຣະເຢຊູເຈົ້າຢູ່ນຳບໍ? ໃນວາຈາພຣະເຈົ້າວັນນີ້ຢາກສອນພວກເຮົາຫຍັງກ່ຽວກັບການເປັນຄອບຄົວສັກສິດ? ເຮັດແນວໃດຄອບຄົວຂອງພວກເຮົາຈຶ່ງເປັນຄອບຄົວສັກສິດເໝືອນກັບຄອບຄົວຂອງພຣະເຢຊູເຈົ້າ?

ບຸກຄົນທຳອິດທີ່ພວກເຮົາສາມາດເຫັນໄດ້ໃນວາຈາພຣະເຈົ້າວັນນີ້ຄືນັກບຸນຢໍແຊຜູ້ເປັນສາມີແລະຫົວໜ້າຄອບຄົວ. ໃນຍາມຫຍຸ້ງຍາກ, ໃນຍາມເກີດອັນຕາຍຂຶ້ນກັບຄອບຄົວ ນັກບຸນຢໍແຊບໍ່ພຽງແຕ່ເປັນຄົນກ້າຫານທີ່ຕ້ອງປະເຊີນໜ້າກັບບັນຫາເຫລົ່ານັ້ນເພື່ອປົກປ້ອງຜູ້ເປັນພັນລະຍາແລະລູກຂອງຕົນເທົ່ານັ້ນ, ແຕ່ທ່ານໄດ້ເປີດໃຈຮັບຟັງແລະເຊື່ອໝັ້ນໃນວາຈາພຣະເຈົ້າຜ່ານທາງເທວະດາຂອງພຣະອົງແລະທ່ານໄດ້ລົງມືປະຕິບັດ. ເຖິງວ່າທ່ານບໍ່ເຂົ້າໃຈສິ່ງທີ່ຈະເປັນມາ ແຕ່ທ່ານກໍໝັ້ນໃຈໃນນ້ຳພຣະໄທຂອງພຣະເຈົ້າ.

ບຸກຄົນທີສອງທີ່ພວກເຮົາຄວນສັງເກດນັ້ນຄືແມ່ພຣະມາຣີອາ. ພຣະນາງໄດ້ນອບນ້ອມແລະເຊື່ອໝັ້ນໃນການຕັດສິນໃຈຂອງນັກບຸນຢໍແຊຜູ້ເປັນຫົວໜ້າຄອບຄົວ. ຍ້ອນພຣະນາງເຊື່ອວ່າສິ່ງທີ່ນັກບຸນຢໍແຊກະທຳນັ້ນ ບໍ່ໄດ້ມາຈາກນ້ຳໃຈຂອງທ່ານເອງ ແຕ່ທ່ານປະຕິບັດຕາມນ້ຳພຣະໄທຂອງພຣະເຈົ້າ. ດັ່ງນັ້ນແມ່ພຣະມາຣີອາແລະນັກບຸນຢໍແຊຈຶ່ງເປັນຈິດໜຶ່ງໃຈດຽວກັນເພື່ອທຳຕາມແຜນການຂອງພຣະເຈົ້າ.

ສ່ວນພຣະເຢຊູກຸມານຜູ້ເປັນລູກ, ເຖິງວ່າພຣະອົງຈະເປັນບຸດຂອງພຣະເຈົ້າແຕ່ພຣະອົງກໍນອບນ້ອມຕາມນ້ຳພຣະໄທຂອງພຣະບິດາເຈົ້າຜ່ານທາງນັກບຸນຢໍແຊຜູ້ເປັນພໍ່ລ້ຽງແລະແມ່ພຣະມາຣີອາຜູ້ເປັນມານດາຂອງພຣະອົງ.

ສິ່ງນີ້ແລທີ່ທຳໃຫ້ນັກບຸນຢໍແຊແມ່ພຣະມາຣີອາແລະພຣະເຢຊູກຸມານເປັນຄອບຄົວສັກສິດ. ຍ້ອນພວກທ່ານໄດ້ເປີດໃຈເຊື່ອໝັ້ນຮັບຟັງສຽງຂອງພຣະເຈົ້າແລະພ້ອມກັນລົງມືປະຕິບັດບໍ່ວ່າໃນຍາມຫຍຸ້ງຍາກກໍຄືໃນຍາມສະບາຍ, ບໍ່ວ່າໃນຍາມສຸຂະພາບເຂັ້ມແຂງ ກໍຄືໃນຍາມເຈັບປ່ວຍ. ນີ້ແລແມ່ນແບບຢ່າງແລະເຄັດລັບສຳລັບພວກເຮົາຜູ້ເປັນສາມີພັນລະຍາ ກໍຄືຜູ້ເປັນລູກເຕົ້າໃນຄອບຄົວ. ຖ້າພວກເຮົາດຳລົງຊີວິດຢ່າງສອດຄ່ອງກັບນ້ຳພຣະໄທຂອງພຣະເຈົ້າໃນທຸກສະຖານະການແລ້ວ ພວກເຮົາກໍຈະເປັນຄອບຄົວສັກສິດເໝືອນກັບຄອບຄົວຂອງພຣະເຢຊູເຈົ້າທີ່ພວກເຮົາສະຫລອງວັນນີ້. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ